# ການເຮັດນ້ຳໝັກຈາກພືດສີຂຽວ

ນຳໃຊ້ພືດສີຂຽວທີ່ຫາໄດ້ງ່າຍຕາມທຳມະຊາດ ເຊັ່ນ: ຜັກບົ້ງ, ໜໍ່ກ້ວຍ ແລະ ຜັກອື່ນໆ ທີ່ມີສີຂຽວ ແລະ ສົດ ການເກັບຄວນເປັນຕອນເຊົ້າໆ ຫລື ກ່ອນຕາເວັນຂຶ້ນ ຫ້າມນຳໄປລ້າງນ້ຳ.

## ວັດສະດຸ ແລະ ອຸປະກອນ

1. ພືດສີຂຽວ ໂດຍເລືອກເອົາສ່ວນທີ່ດີທີ່ສຸດ ຄື: ລຳຕົ້ນ ໃບ ຍອດ; 2. ຖັງພາສຕິກປາກກວ້າງ; 3. ນ້ຳຕານຊາຍແດງ;
4. ເຈ້ຍຂາວແຜ່ນໃຫຍ່; 5. ເຊືອກຟາງ; 6. ເກືອເມັດ.








## ອັດຕາສ່ວນປະສົມ

ພືດສີຂຽວ 7 ກລ : ນ້ຳຕານຊາຍແດງ 3 ກລ : ເກືອເມັດ 0.1 ກລ.

## ຂັ້ນຕອນ ແລະ ວິທີການເຮັດ

* ຊອຍພືດສີຂຽວໃຫ້ມີຂະໜາດ 2-4 ຊມ.
* ແບ່ງນ້ຳຕານຊາຍແດງອອກເປັນສອງສ່ວນເທົ່າໆກັນ ສ່ວນທີ1 ໂຮຍໃສ່ກອງພືດສີຂຽວໃຊ້ມືປະສົມເຂົ້າກັນສະຫລັບໄປມາ 2-3 ເທື່ອ.
* ນຳໄປບັນຈຸໃນຖັງ ກົດລົງໃຫ້ເຫລືອ 2/3 ຂອງຖັງ ເອົາຖົງນ້ຳເຕັງ ປິດປາກຖັງດ້ວຍເຈັ້ຍຂາວ ມັດດ້ວຍເຊືອກຟາງ ປະໄວ້ 1 ຄືນ.
* ໄຂຝາເອົາຖົງນ້ຳທີ່ເຕັງອອກ ໃສ່ນ້ຳຕານສ່ວນທີ 2 ລົງໄປ ໂຮຍທັບດ້ວຍເກືອ 0.1 ກລ. ປິດປາກຖັງດ້ວຍເຈັ້ຍຂາວ ມັດເຊືອກ ປະໄວ້ໃນບ່ອນຮົ່ມ 8-12 ມື້.
* ເມື່ອຄົບກຳນົດແລ້ວໃຫ້ກອງເອົາແຕ່ນ້ຳບັນຈຸໃສ່ຂວດຢາງປິດຝາໄວ້ໃນບ່ອນຮົ່ມ ແລະ ນຳໄປໃຊ້ ຫລື ສາມາດເກັບໄວ້ໄດ້ 3 ເດືອນ.




## ອັດຕາການໃຊ້

ນ້ຳໝັກຈາກພືດສີຂຽວ 2 ບ່ວງແກງ ຕໍ່ ນ້ຳ 10 ລິດ.

## ຄຸນປະໂຫຍດ

1. ປະສົມນ້ຳໃຫ້ສັດກິນ ຊ່ວຍເສີມສ້າງການເຮັດວຽກຂອງຈຸລິນຊີໃນສັດ.
2. ປະສົມອາຫານສັດ ເພື່ອເພີ່ມລົດຊາດ ແລະ ການຍ່ອຍໄດ້ຂອງອາຫານສັດດີຂຶ້ນ.
3. ຊ່ວຍຍ່ອຍສະຫລາຍວັດສະດຸ ແລະ ດັບກິ່ນເໝັນນ້ຳເສຍຈາກປະສະວະ ແລະ ອາຈົມໝູ.
4. ຫົດກອງປຸ໋ຍໝັກ ຈະຊ່ວຍຍ່ອຍສະຫລາຍໄດ້ໄວຂຶ້ນ.
5. ເສດເຫລືອຈາກການໝັກສາມາດນຳໄປລ້ຽງໝູໄດ້.

NTPC
Powering the Future
ບໍລິສັດໄຟຟ້ານ້ຳເທີນ 2 ຈຳກັດ
ພະແນກສິ່ງແວດລ້ອມ ແລະ ສັງຄົມ
ໂຄງການລຸ່ມເຂື່ອນ ແລະ ເຮືອນຈັກ, ໜ່ວຍງານຟື້ນຟູຊີວິດການເປັນຢູ່
ມີນາ 2013